# ການອະນຸລັກ ແລະ ການນຳໃຊ້ຄຸນປະໂຫຍດ ຂອງສັດປ່າ ໃຫ້ມີຄວາມຍືນນານ



ບົດຮຽນນີ້ໄດ້ຜັນຂະຫຍາຍມາຈາກ ຂໍ້ມູນຂ່າວສານທີ່ພົບຢູ່ໃນຜົນການສຳຫຼວດຂອງອົງການ WSC ທີ່ໄດ້ອະທິບາຍໄວ້ໃນບົດການລ່າ ແລະ ການນຳໃຊ້ສັດປ່າ

ເປົ້າໝາຍ ນະໂຍບາຍກ່ຽວກັບການຄຸ້ມຄອງຈັດສັນປ່າໄມ້ ແລະ ການລຶບລ້າງຄວາມທຸກຍາກ ໃນ ສປປ ລາວ ແມ່ນເພື່ອຫຼຸດຜ່ອນອັດຕາການລ່າສັດປ່າ ແລະ ການຄ້າຂາຍສັດປ່າ ແບບບໍ່ຍືນຍົງ, ພ້ອມດຽວກັນນັ້ນ ທັງປັນການຍົກສູງສະມັດຕະພາບ ຂອງການຄ້ຳປະກັນທາງດ້ານສະບຽງອາຫານ ຂອງປະຊາຊົນໃນເຂດ ຊົນນະບົດແຕ່ເຖິງແນວໃດກໍ່ຕາມ, ຊະນິດພັນສັດປ່າຫຼາຍຊະນິດ ແມ່ນໄດ້ຫຼຸດໜ້ອຍຖອຍລົງ ຢູ່ໃນເຂດເນີນສູງ, ຊຶ່ງທ່າອ່ຽງດັ່ງກ່າວ ບໍ່ພຽງແຕ່ມີຜົນກະທົບເຖິງແຕ່ທາງດ້ານຊີວະນາໆພັນຢ່າງດຽວເທົ່ານັ້ນແຕ່ມັນຍັງເປັນສິ່ງ ທີ່ທ້າທາຍເຖິງ ສະພາບການ ຫາລ້ຽງຊີບ ແລະ ການດຳລົງຊີວິດຂອງປະຊາຊົນ ຢູ່ພາຍໃນ ແລະ ເຂດອ້ອມແອ້ມເຂດປ່າສະຫງວນ ໃນອະນາຄົດ ອີກດ້ວຍ.

ອົງການອະນຸລັກສັດປ່າ (WCS) ໄດ້ສັງລວມເອົາ ຜົນການສຳຫຼວດຕາມຄອບຄົວ ຢູ່ໃນ 24 ໝູ່ບ້ານ ທີ່ຢູ່ພາຍໃນ ແລະ ຢູ່ໃນເຂດໃກ້ຄຽງ ກັບປ່າສະຫງວນແຫ່ງຊາດ ນ້ຳຮາ, ແຂວງ ຫຼວງນ້ຳທາ ເພື່ອມາປະເມີນ ເຖິງຈຳນວນປະລິມານຂອງການລ່າສັດປ່າ, ໂດຍທົ່ວໄປແລ້ວ ສັດປ່າທີ່ປະຊາຊົນໃນເຂດດັ່ງກ່າວ ລ່າມາ ເປັນປົກກະຕິ ມີ: ສັດທີ່ລ້ຽງ ລູກດ້ວຍນ້ຳນົມ, ນົກທຸກປະເພດ, ສັດເລືອຄານອື່ນໆ. ສັດປ່າທີ່ລ່າມາໄດ້ນີ້ ໄດ້ຖືກນຳເອົາມາບໍລິໂພກເປັນອາຫານ ພ້ອມທັງນຳໄປຂາຍເປັນສິນຄ້າ. ຫຼັງຈາກນັ້ນໄດ້ນຳເອົາຜົນການສຳຫຼວດດັ່ງກ່າວມາສົມທຽບ ກັບນະໂຍບາຍຂອງລັດຖະກອນ ທີ່ໝຸ້ງໃສ່ການຈຳກັດການລ່າສັດປ່າປະເພດຄຸ້ມຄອງໃຫ້ຢູ່ໃນກອບອັດຕາຂອງຄວາມຍືນນານໄປຄຽງຄູ່ກັບ

ຜົນສຳເລັດໃນການຄ້ຳປະກັນດ້ານສະບຽງອາຫານ. ຜົນການສຳຫຼວດ ໄດ້ບອກໃຫ້ຮູ້ວ່າ ບັນດາສັດປ່າຈຳນວນຫຼວງຫຼາຍ ຢູ່ທາງພາກເໜືອຂອງ ສປປ ລາວ ໄດ້ຫຼຸດໜ້ອຍຖອຍລົງ. ເພື່ອສະກັດກັ້ນການຫຼຸດລົງຂອງປະລິມານສັດປ່າຂະໜາດໃຫຍ່-ໃນເຂດພາກເໜືອຂອງ ສປປ ລາວ ແລະ ຮັບປະກັນໃຫ້ມີຊີ້ນສັດປ່າ ສຳລັບການດຳລົງຊີວິດ ຂອງປະຊາຊົນ ໃນເຂດຊົນນະບົດ ໃຫ້ມີຄວາມຍືນຍົງໃນອະນາຄົດຂ້າງໜ້າ, ເຫັນວ່າ ມີຄວາມຈຳເປັນຕ້ອງໄດ້ມີການດຳເນີນການຫຼາຍຢ່າງ.



## ການຄຸ້ມຄອງການຄ້າຂາຍ ແລະ ການລ່າສັດປ່າ ແບບບໍ່ຖືກຕ້ອງຕາມກົດໝາຍ ຂອງຂ້າງ ຄົນນອກ

### 1. ການຄ້າຂາຍສັດປ່າ:

ສັດປ່າຈຳນວນຫຼວງຫຼາຍ ລວມທັງ ສັດປ່າ ທີ່ອີງການອະນຸລັກສັດປ່າ (WCS) ໄດ້ດຳເນີນການສຶກສາສຳຫຼວດມາແລ້ວ ໄດ້ຖືກນຳມາຊື້ຂາຍ ຢູ່ໃນລະດັບໃດໜຶ່ງ. ຍ້ອນວ່າ, ການຊື້-ຂາຍສັດປ່າ ເປັນສິ່ງທີ່ຜິດ ກົດໝາຍ ບວກໃສ່ກັບ ຄວາມບໍ່ເຕັມໃຈຂອງຄອບຄົວໃນການໃຫ້ຂໍ້ມູນ, ຂະໜາດ ແລະ ປະລິມານຂອງ ການຊື້-ຂາຍສັດປ່າ. ຕາມບົດລາຍງານ ເຫັນວ່າເປັນການຄາດຄະເນ ແບບຕ່ຳໆ. ທັງໝົດເຫຼົ່ານີ້ແມ່ນການວິຕົກ ກ່ຽວກັບການດຳລົງຊີວິດ ຂອງປະຊາຊົນໃນເຂດຊົນນະບົດດ້ວຍເຫດຜົນຫຼາຍຢ່າງ ດັ່ງນັ້ນ:

- ການຄ້າຂາຍສັດປ່າ ເປັນການລະເມີດນະໂຍບາຍການລຶບລ້າງຄວາມທຸກຍາກ ຂອງລັດຖະບານ ໂດຍກົງ, ແຕ່ຖ້າປະຊາຊົນ ບໍ່ນຳເອົາສັດປ່າໄປຂາຍ ແລະ ນຳໃຊ້ສະເພາະເປັນອາຫານສຳລັບຄົວເຮືອນເທົ່ານັ້ນ, ກໍ່ຈະເປັນການນຳໃຊ້ສັດປ່າເຫຼົ່ານັ້ນແບບຍືນຍົງຖາວອນໄດ້.
- ມັນມີຜົນກະທົບຕໍ່ການຫຼຸດໜ້ອຍຖອຍລົງຂອງສັດປ່າ ຊະນິດທີ່ມີການລ່າເກີນຂອບເຂດ, ເຮັດໃຫ້ຄວາມພະຍາຍາມ ຈະເຮັດໃຫ້ມັນມີຄວາມຍືນຍົງ ເປັນໄປໄດ້ຍາກ ແລະ ອາດຈະບໍ່ບັນລຸຜົນໄດ້.
- ການຄ້າຂາຍສັດປ່າ ຊະນິດຫວງຫ້າມ ບໍ່ຖືກຕ້ອງຕາມກົດໝາຍ ເປັນການຫຼຸດຈຳນວນປະຊາກອນ ສັດທີ່ມີໜ້ອຍຢູ່ແລ້ວນັ້ນລົງຕື່ມ, ຊຶ່ງລວມທັງ ຊະນິດພັນສັດທີ່ມີລາຄາສູງ ແລະ ມີຄວາມສຳຄັນ ທາງດ້ານເສດຖະກິດ ໃນໄລຍະຍາວ (ເປັນແຮງດຶງດູດສຳລັບການທ່ອງທ່ຽວທຳມະຊາດ ເຊັ່ນຕົວ ຢ່າງ: ລີງ, ທະນີ, ແລະ ປະເພດນົກໃຫຍ່ ຄື ນົກເງືອກ, ນົກຮັງ, ນົກທິດທີ່ ແລະ ອື່ນໆ), ທີ່ເຫັນວ່າ ເປັນທ່າແຮງອັນສຳຄັນໃນການສ້າງລາຍຮັບ ໃຫ້ແກ່ປະຊາຊົນໃນເຂດພູດອຍ ທີ່ອາໄສຢູ່ໃກ້ເຂດປ່າສະຫງວນ.

## ຂໍ້ແນະນຳ:

- ຄວາມພະຍາຍາມໃຫ້ການສະໜັບສະໜູນ ເພື່ອສະກັດກັ້ນ ຫຼື ກວດກາ ບໍ່ໃຫ້ລົດ ຂອງນັກທ່ອງທ່ຽວພາຍນອກເຂົ້າໄປຕາມເສັ້ນທາງລົດ ແລະ ທາງຍ່າງ ຢູ່ພາຍໃນເຂດປ່າສະຫງວນ (ນັບທັງລົດບັນທຸກ ແລະ ລົດຈັກ). ຫຼືກລັ້ງການສ້າງເສັ້ນທາງລົດ ແລະ ທາງຍ່າງໃໝ່ ຢູ່ໃນ ເຂດພື້ນທີ່ປ່າສະຫງວນ.
- ພະຍາຍາມໃຫ້ການສະໜັບສະໜູນ ກ່ຽວກັບການປູກຈິດສຳນຶກ ໃຫ້ແກ່ຊຸມຊົນ ເພື່ອໃຫ້ເຂົາເຈົ້າໄດ້ ຮັບຮູ້ວ່າການຄ້າຂາຍສັດປ່າຢູ່ໃນທົ່ວທຸກບ່ອນ ນັບທັງໃນເຂດພູດອຍ ແມ່ນຜິດຕໍ່ ນະໂຍບາຍຂອງ ລັດຖະບານ ກ່ຽວກັບການລຶບລ້າງຄວາມທຸກຍາກ ແລະ ເປັນໄພຂົ່ມຂູ່ ຕໍ່ການປັບປຸງຊີວິດການເປັນຢູ່ ຂອງປະຊາຊົນເຂດຊົນນະບົດ ແລະ ລວມທັງຄວາມໝັ້ນຄົງ ແລະ ໃນການສົ່ງເສີມ ອຸດສາຫະກຳການທ່ອງທ່ຽວແບບທຳມະຊາດເລັ່ງໃສ່ເສີມການສຶກສາ ແລະ ໂຄສະນາ ໃນເຂດຊື້ຂາຍ ສັດປ່າ ໃນຕົວເມືອງ ດ້ວຍການປັບໃໝ, ເຜີຍແຜ່ຂໍ້ມູນຂ່າວສານຢູ່ຕາມຕະຫຼາດສັດປ່າ ແລະ ຈຸດກວດກາຕ່າງໆຕາມເສັ້ນທາງ.



- ພະຍາຍາມໃຫ້ການສະໜັບສະໜູນ ເພື່ອຍົກສູງຄວາມເອົາໃຈໃສ່ ຕາມຈຸດກວດກາຕ່າງໆຕາມ ເສັ້ນທາງ ແລະ ຕາມຕະຫຼາດໃນຕົວເມືອງ ເພື່ອສະກັດກັ້ນ ແລະ ຢຸດຕິການຂາຍສັດປ່າ ທຸກຊະນິດ. ເຖິງແມ່ນວ່າການຂາຍປະເພດສັດປ່າທົ່ວໄປ ເຊັ່ນວ່າ: ກະຮອກ, ໝູຊີງ, ໄກ່ປ່າ ແລະ ນົກ ທີ່ເປັນສັດທຳມະດາ ຈະຄິດວ່າ ບໍ່ເປັນພິດໄພຫຍັງຫຼາຍກໍຕາມ, ແຕ່ຜົນການສຶກສາຄັ້ງນີ້ ສະເໜີວ່າ ພວກມັນເຫຼົ່ານີ້ ມີຄວາມສຳຄັນຫຼາຍ ສຳລັບ ການຊົມໃຊ້ ແລະ ການບໍລິໂພກຂອງຊາວບ້ານ.

## 2. ການລ່າສັດ ໂດຍ ບຸກຄົນພາຍນອກ

ເຖິງແມ່ນວ່າ ລະບຽບກົດໝາຍ ຈະຈຳກັດການລ່າສັດປ່າຂອງຊາວບ້ານ ໃນເຂດປ່າ ສະຫງວນກໍ ຕາມ, ຜ່ານການສຳຫຼວດ ປະມານ 40% ຂອງຄອບຄົວພາຍໃນບ້ານ ໄດ້ລາຍງານໃຫ້ຮູ້ວ່າ ຍັງມີບຸກຄົນ ພາຍນອກ ໄດ້ເຂົ້າໄປລ່າສັດປ່າໃນເຂດໝູ່ບ້ານຂອງຕົນ. ຂະໜາດ ແລະ ປະລິມານການລ່າສັດ ທີ່ເກັບກຳ ໄດ້ໃນເວລາສຳຫຼວດ ເປັນພຽງແຕ່ສ່ວນໜຶ່ງໃນປະລິມານລວມ ທັງໝົດ ຂອງສັດປ່າທີ່ຖືກລ່າມາໄດ້ ໃນເຂດ ພື້ນທີ່ດັ່ງກ່າວ. ການສ້າງທາງ ລົດ ແລະ ທາງຍ່າງເຂົ້າໄປເຖິງພື້ນທີ່ໃນປ່າສະຫງວນທີ່ບໍ່ເຄີຍມີ ເສັ້ນທາງມາ ກ່ອນ, ເຮັດໃຫ້ຄົນພາຍນອກ ສາມາດເຂົ້າໄປລ່າສັດ ແລະ ຊື້ສັດປ່າໄດ້. ຢູ່ໃນເຂດອື່ນໆຂອງ ສປປ ລາວ, ການສ້າງເສັ້ນທາງ ແມ່ນມີສ່ວນກ່ຽວຂ້ອງກັນ ກັບການເພີ້ມຕົວຂື້ນຂອງການຂາຍ ແລະ ການຫຼຸດລົງຂອງ ປະລິມານ ເຄື່ອງປ່າຂອງດົງ, ອັນສິ່ງຜົນສະທ້ອນອັນຮ້າຍແຮງໃຫ້ແກ່ ຄອບຄົວຜູ້ທີ່ທຸກຍາກ ແລະ ຂາດເຂີນ (ເບິ່ງໃນບົດລາຍງານ ຂອງທ່ານ Chamberlain et al. 2002). ການສ້າງເສັ້ນທາງລົດເຂົ້າໄປໃນ ເຂດແດນຂອງ ປ່າສະຫງວນ ຖືວ່າ ເປັນການເຊື້ອເຊີນ ຄົນພາກນອກ ໄດ້ເຂົ້າໄປລ່າສັດປ່າ ໃນເຂດດັ່ງກ່າວ. ນອກນັ້ນ, ຍັງໄດ້ເຮັດໃຫ້ຊາວບ້ານ ແລະ ພະນັກງານ ທີ່ຄຸ້ມຄອງປ່າສະຫງວນ ພົບຄວາມຫຍຸ້ງຍາກ ແລະ ທັງເຮັດໃຫ້ການປະຕິບັດ ລະບຽບກົດໝາຍ ຂອງການຄຸ້ມຄອງ ສັດປ່າ ບໍ່ໄດ້ຮັບຜົນດີ ເທົ່າທີ່ຄວນ.

## ຂໍ້ແນະນຳ



ບາດກ້າວຕ່າງໆທີ່ໄດ້ ລວບລວມໄວ້ໃນໜ້າຜ່ານມາ ກໍເປັນ ການຈຳກັດການລ່າສັດຂອງບຸກຄົນພາຍນອກເຊັ່ນກັນ. ນອກຈາກນັ້ນ, ອຳນາດການປົກຄອງທ້ອງຖິ່ນ ຍັງສາມາດດຳເນີນການໄດ້ຕື່ມ ດັ່ງນີ້:

- ພະຍາຍາມສະໜັບສະໜູນເພື່ອສຶກສາອົບຮົມໃຫ້ຄວາມຮູ້ແກ່ປະຊາຊົນ (ຜ່ານການຕິດປ້າຍ ບອກສະຖານທີ່ ແລະ ການໂຄສະນາຜ່ານສື່ສານມວນຊົນຕ່າງໆ) ກ່ຽວກັບ ສະຖານທີ່ຕັ້ງ, ຂອບເຂດຊາຍແດນຂອງເນື້ອທີ່ປ່າສະຫງວນ ແລະ ບອກໃຫ້ຮູ້ວ່າ ຜູ້ໃດມີສິດໃນການລ່າສັດປ່າ, ໄດ້ຢ່າງຖືກຕ້ອງ ຢູ່ໃນເຂດຄຸ້ມຄອງ ປ່າສະຫງວນ
- ພະຍາຍາມສະໜັບສະໜູນ ການບັງຄັບໃຊ້ກົດໝາຍຢ່າງເຂັ້ມງວດເພື່ອຫ້າມປາມ ບໍ່ໃຫ້ບຸກຄົນ ພາຍນອກ ເຂົ້າໄປລ່າສັດໃນເຂດປ່າສະຫງວນ, ຕາມລະບຽບການ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0524.

## ການຄຸ້ມຄອງ ການລ່າສັດປ່າ ຂອງ ຊາວບ້ານໃນເຂດປ່າ ສະຫງວນ

### 3. ຂອບເຂດພື້ນທີ່ ແລະ ລະດູການ ລ່າສັດປ່າ

ລະດູການທີ່ຊາວບ້ານມັກລ່າສັດປ່າຫຼາຍທີ່ສຸດ ແມ່ນຢູ່ໃນລະຫວ່າງ ເດືອນ ກັນຍາຫາ ເດືອນ ມີນາ ແລະ ມັນເປັນລະດູ-ການອັນດຽວກັນກັບໄລຍະທີ່ຊາວບ້ານກຳລັງເກັບກູ້ເຂົ້າໄຮ່ຊຶ່ງເປັນ ໄລຍະທີ່ເຂົາເຈົ້າຂາດແຄນອາຫານ (ເດືອນກັນຍາ-ຕຸລາ), ໃນເວລາປະຊາຊົນເກັບກ່ຽວເຂົ້ານາ (ເດືອນຕຸລາ-ທັນວາ), ແລະ ເປັນເວລາທີ່ປະຊາຊົນ ຫວ່າງວຽກ (ທັນວາ-ກຸມພາ), ແລະ ຕາມມາດ້ວຍເວລາປະຊາຊົນຖາງປ່າເຮັດໄຮ່(ກຸມພາ-ມີນາ) (ຂໍ້ມູນໄດ້ມາຈາກ NAFRI, 2003 ແລະ ຂໍ້ມູນ ໄດ້ຈາກການສຶກສາຄັ້ງນີ້). ໃນລະບຽບການ ຂອງ ກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0524 ແມ່ນອະນຸຍາດໃຫ້ລ່າສັດໄດ້ພາຍໃນ 6 ເດືອນ (ເດືອນພະຈິກ ຫາ ເມສາ); ໃນນັ້ນ ສຳລັບ ການລ່າສັດ ແມ່ນໃນເດືອນກັນຍາ ແລະ ເດືອນຕຸລາ, ສ່ວນການ ຈັບກົບ, ຂຽດ ແມ່ນໃນເດືອນ ພຶດສະພາ ແລະ ເດືອນ ມິຖຸນາ. ຖ້າເບິ່ງໃນທາດແທ້ຕາມທຳມະຊາດຂອງ ການລ່າສັດ ແລະ ຊົມໃຊ້ສັດປ່າ ທົ່ວໄປ ເພື່ອມາເປັນອາຫານ ແລະ ປຸງແຕ່ງເປັນຢາແລ້ວ, ເຫັນວ່າ ມີຄວາມ ຫຍຸ້ງຍາກ ແລະ ອາດຈະເປັນໄປບໍ່ໄດ້ທີ່ຈະສະກັດກັ້ນ ການລ່າສັດປ່າຊະນິດທີ່ມີຢູ່ທົ່ວໄປ (ປະເພດຄຸ້ມຄອງ ແລະ ບໍ່ຄຸ້ມຄອງ) ໃນລະດູ ການຫວງຫ້າມ, ໂດຍສະເພາະແມ່ນ ໃນໄລຍະທີ່ອຶດເຂົ້າກິນ. ເຖິງແມ່ນວ່າ, ໃນລະດູການນີ້ ຊາວບ້ານຈະມີສັດລ້ຽງຢູ່ກໍ່ຕາມ, ພວກເຂົາມັກຈະໄປລ່າສັດປ່າ ແລະ ຮັກສາສັດລ້ຽງໄວ້ເພື່ອນຳໄປຂາຍ ໃນເວລາມີ ຄວາມຈຳເປັນ ແລະ ຕ້ອງການເງິນ. ເນື່ອງຈາກວ່າຊາວບ້ານສ່ວນຫຼາຍ ມັກກິນຊີ້ນ ສັດປ່າເປັນອາຫານ, ເຖິງແມ່ນວ່າ ຈະມີສັດລ້ຽງຢູ່ກໍ່ຕາມ, ແຕ່ເຂົາເຈົ້າກໍ່ຈະຍັງໄປລ່າສັດປ່າຢູ່ ເວັ້ນເສຍແຕ່ວ່າ ອຳນາດການປົກຄອງທ້ອງຖິ່ນ ຈະບັງຄັບໃຊ້ ລະບຽບກົດໝາຍ ກ່ຽວກັບການລ່າສັດປ່າ.

## ຂໍ້ແນະນຳ

- ເນື່ອງຈາກວ່າສັດບາງຊະນິດທີ່ມີຢູ່ທົ່ວໄປມີຄວາມສຳຄັນຫຼາຍສຳລັບການຄ້ຳປະກັນ ທາງດ້ານສະບຽງອາຫານ (ເຊັ່ນຕົວຢ່າງ ກະຮອກ, ໜູ, ນົກກາງເຂນ), ດັ່ງນັ້ນ, ມັນອາດຈະມີຄວາມເປັນໄປ ໄດ້ສູງຖ້າຈຳກັດການລ່າສັດປະເພດນີ້ ເປັນສະຖານທີ່, ແທນທີ່ ຈະຈຳກັດຕາມລະດູການ. ການເຮັດເຊັ່ນນີ້ ຈະເຮັດໃຫ້ຊາວບ້ານສາມາດລ່າສັດປ່າປະເພດນີ້ ໃນເຂດຄຸ້ມຄອງຂອງປ່າສະຫງວນ ໄດ້ຕະຫຼອດປີ, ໃນຂະນະທີ່ເພີ້ມຄວາມພະຍາຍາມເກືອດຫ້າມ ແລະ ສະກັດກັ້ນ ການລ່າສັດປ່າ ທຸກປະເພດ ຢູ່ພາຍໃນເຂດຫວງຫ້າມຂອງປ່າສະຫງວນຢ່າງເຂັ້ມງວດ. ສ່ວນການເກືອດຫ້າມ ແລະ ສະກັດກັ້ນການລ່າສັດປ່າ ປະເພດຫວງຫ້າມ ຈຳເປັນຕ້ອງໄດ້ປະຕິບັດຕາມລະບຽບກົດໝາຍ ໃນເວລາ ແລະ ສະຖານທີ່.



- ຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ກ່ຽວກັບ ບົດບາດ ຂອງສັດປ່າ ຕໍ່ກັບການຄໍ້າປະກັນສະບຽງ ອາຫານຂອງ ປະຊາຊົນໃນເຂດຊົນນະບົດ ຂອງ ສປປ ລາວ, ແມ່ນຍັງບໍ່ທັນເລິກເຊິ່ງ ແລະ ບໍ່ທັນໄດ້ມີການບັນທຶກເປັນ ລາຍລັກອັກສອນ ໄດ້ດີເທົ່າທີ່ຄວນ. ການສຶກສາກ່ຽວກັບ ການໃຫ້ທາດ ບໍາລຸງ (ເບິ່ງໃນເອກະສານ ຂອງ ທ່ານ Clendon and Krahn ໃນປຶ້ມເຫຼັ້ມນີ້) ທີ່ໄດ້ເຮັດໃນຊຸມ ປີຜ່ານມານີ້ ຢືນຢັນວ່າ ຊີ້ນສັດປ່າຍັງມີບົດບາດສໍາ ຄັນສູງໃນການສະໜອງທາດອາຫານ ແກ່ປະຊາຊົນໃນເຂດຊົນນະບົດ. ຂໍ້ມູນກ່ຽວກັບປະເພດ, ຄວາມຖີ່ ແລະ ປະລິມານການຊົມໃຊ້ ຊີ້ນສັດປ່າ ຂອງຊາວບ້ານ ທີ່ລະອຽດໄປກວ່ານີ້ ໂດຍສົມທົບກັບແຫຼ່ງທາດໂປຼຕີນ ອື່ນໆ ຈໍາເປັນຕ້ອງໄດ້ເກັບກໍາພີ້ມເຕີມເພື່ອນໍາໃຊ້ເປັນບ່ອນອີງ ໃນການສ້າງຍຸດທະສາດການຄຸ້ມຄອງສັດປ່າຢູ່ ໃນ ເຂດປ່າສະຫງວນ.

## 4. ວິທີການລ່າສັດປ່າ

ເຖິງແມ່ນວ່າ ຈະມີການເກັບປືນລ່າສັດ ຢູ່ໃນໝູ່ບ້ານໃນເຂດປ່າສະຫງວນໃນ ຫຼາຍປີຜ່ານມາ ກໍຕາມ, ແຕ່ຍັງເຫັນວ່າ ການລ່າສັດດ້ວຍປືນ ຍັງເປັນວິທີການທີ່ ນໍາໃຊ້ຫຼາຍວ່າວິທີການອື່ນໆ ແລະ ຍັງຄົງເປັນທີ່ນິຍົມສໍາລັບກາລ່າສັດໃຫຍ່ທີ່ ຫາຍາກ ແລະ ສັດຈໍາພວກນີ້ ກໍມີທ່າອ່ຽງ ຫຼຸດລົງ. ປືນທີ່ມີໃນໝູ່ບ້ານ ຢູ່ໃນເຂດປ່າສະຫງວນ ມີຢູ່ຫຼາຍປະເພດ, ລວມ ທັງປະເພດປືນແກັບ ທີ່ຊາວບ້ານຜະລິດເອງທີ່ບໍ່ ໄດ້ຈົດທະບຽນ ແລະ ອາກາ (AK47s) ທີ່ລັດຖະບານໄດ້ແຈກຢາຍໃຫ້ ທະຫານກອງຫຼອນປະຈໍາບ້ານ. ສ່ວນຢູ່ເຂດພື້ນທີ່ອື່ນ ບັນດາລູກປືນທະຫານ ທີ່ລັດຖະບານ ໄດ້ເບີກໃຫ້ທະຫານກອງ ຫຼອນ ປະຈໍາບ້ານ ໄດ້ນໍາມາດັດປັ່ງນສະພາບໃໝ່ ຈາກຫົວລູກປືນ ມາເປັນລູກປືນອັດໃໝ່ ດ້ວຍລູກກົ່ວຫຼາຍລູກ (ປືນລູກອັດ) ແລະ ກະສອບລູກ ອັນດຽວສາມາດນໍາມາ ອັດໃໝ່ ເພື່ອໃຫ້ໃຊ້ໄດ້ຫຼາຍເທື່ອ. (ແຫຼ່ງ: ຈົດໝາຍຂ່າວຂອງ ທ່ານ Hansel). ນອກຈາກປືນແລ້ວ, ຍັງມີອາວຸດປະເພດກັບດັກ/ແຮ້ວ ທີ່ມີລັກສະນະພິເສດອີກຫຼາຍຊະນິດ ທີ່ຊາວ ບ້ານໃຊ້ຈັບບັນດານົກ ແລະ ສັດທີ່ລ້ຽງລູກດ້ວຍນໍ້ານົມ ປະເພດຕ່າງໆ ທີ່ຫາກິນຕາມໜ້າດິນ.

## ຂໍ້ແນະນຳ:



- ຄວນສືບຕໍ່ເກັບປືນ ແລະ ເພີ່ມໃນການເກັບຂຶ້ນຕື່ມ. ການຄວບຄຸມ ປືນນີ້ ຄິດວ່າຈະສ້າງຜົນສະທ້ອນໃຫ້ແກ່ການຄໍ້າປະກັນສະບຽງອາຫານ ຂອງ ຊາວບ້ານ, ເພາະວ່າການຈັບສັດປ່າສາມາດ ເຮັດໄດ້ດ້ວຍຫຼາຍວິທີ ເຊັ່ນ: ການໃສ່ແຮ້ວ, ກັບດັກ ແລະ ອື່ນໆ. ຄວາມພະຍາຍາມດັ່ງກ່າວ ຄວນສຸມໃສ່ໝູ່ບ້ານທີ່ຊື້-ຂາຍສັດປ່າ ຫຼື ມີບຸກຄົນພາຍນອກ ທີ່ເຂົ້າໄປ ລ່າສັດປ່າ. ເນື່ອງຈາກວ່າການໃຊ້ປືນລ່າສັດ ມີຜົນສະທ້ອນກະທົບທັນ ຕໍ່ການ ອະນຸລັກຊີວະນາໆພັນ ແລະ ການດຳລົງຊີວິດ ຂອງປະຊາຊົນໃນເຂດຊົນ ນະບົດ, ດັ່ງນັ້ນ ຄວນບັງຄັບໃຊ້ລະບຽບກົດໝາຍຢ່າງເຂັ້ມງວດ ແລະ ຢຶດເອົາປືນ ຈາກຜູ້ໃຊ້ປືນ ຢູ່ໃນເຂດປ່າສະຫງວນ ໄດ້ທຸກສະຖານທີ່ ແລະ ທຸກເວລາ.
- ການນຳໃຊ້ອາວຸດ/ປືນ ທະຫານກອງຫຼອນປະຈຳບ້ານ ສຳລັບການລ່າສັດປ່ານັ້ນ ອາດຈະມີຜົນສະທ້ອນສູງ ຫຼາຍກວ່າການນຳໃຊ້ປືນແກັບ, ເນື່ອງຈາກວ່າຖ້ານຳມາອັດລູກຂີ້ກົ່ວໃສ່ໃໝ່ແລ້ວມັນສາມາດໃຊ້ງານໄດ້ ບໍ່ວ່າ ແຕ່ ໃນການລ່າສັດນ້ອຍ ກໍ່ຄື ສັດໃຫຍ່ ໄດ້ຢ່າງມີປະສິດທິຜົນສູງ. ດັ່ງນັ້ນ, ຕ້ອງໄດ້ມີການຄຸ້ມຄອງການນຳ ໃຊ້ ປືນດັ່ງກ່າວພ້ອມທັງລູກຂອງມັນ ຢ່າງຮັດກຸມ ແລະ ຕ້ອງຮັບປະກັນໄດ້ວ່າອາວຸດດັ່ງກ່າວນັ້ນຈະບໍ່ເອົາໄປນຳ ໃຊ້ເຂົ້າໃນການລ່າສັດປ່າ ຢູ່ໃນເຂດປ່າສະຫງວນ.
- ການເກັບປືນພຽງຢ່າງດຽວ ຈະບໍ່ສາມາດຈຳກັດຂີດຂັ້ນຂອງການລ່າສັດປ່າທຸກປະເພດໄດ້ ໂດຍສະເພາະຈຳ ພວກນົກ ແລະ ສັດລ້ຽງລູກດ້ວຍນ້ຳນົມ. ຖ້າມີການຈຳກັດການນຳໃຊ້ປືນ, ການນຳໃຊ້ເຄື່ອງມືລ່າສັດປະເພດ ແຮ້ວ ຫຼື ກັບດັກ ອາດຈະເພີ່ມຂຶ້ນ, ສະນັ້ນ, ຄວນເຂັ້ມງວດທາງດ້ານການກຳນົດໝາຍເຂດແດນຂອງເຂດຫວງ ຫ້າມ ແລະ ມີການເກືອດຫ້າມການລ່າສັດຢູ່ໃນເຂດດັ່ງກ່າວ ຢ່າງຮັດກຸມ ເພື່ອຮັບປະກັນການເຄື່ອນຍ້າຍຂອງ ສັດປ່າ.

ການນຳໃຊ້ແຮ້ວ ຫຼື ກັບດັກຈະບໍ່ມີຜົນເສຍຫາຍຫຍັງຫຼາຍຖ້າມີການເລືອກເຍື່ອທີ່ເໝາະສົມ, ດັ່ງນັ້ນໃນເວລາເລືອກ ເຍື່ອຕາມແຮ້ວ, ບໍ່ຄວນເຈາະຈົງໃສ່ແຕ່ເຍື່ອທີ່ສັດປະເພດຫວງຫ້າມມັກ. ເພື່ອໃຫ້ສາມາດກຳນົດໃຫ້ໄດ້ວ່າມັນມີບັນ ຫາຫຼາຍເທົ່າໃດນັ້ນ, ຄວນຈະປະເມີນຜົນການລ່າເນື້ອດ້ວຍແຮ້ວ ຫຼື ກັບດັກ ເຊັ່ນ: ແຮ້ວຟານ ແລະ ແຮ້ວຕ່ຳໂດຍ ການກຳນົດຄວາມຖີ່ຂອງແຕ່ລະປະເພດສັດປ່າທີ່ຈັບໄດ້. ນອກຈາກນັ້ນ ຄວນທຳການທົບທວນເບິ່ງຕື່ມວ່າແຮ້ວປະ ເພດໃດ ມີຜົນສະທ້ອນຕໍ່ ສັດປ່າປະເພດຫວງຫ້າມ ແລະ ສັດປ່າປະເພດມີຄວາມສ່ຽງສູງໃນການສູນພັນ.

ຕົວຢ່າງ: ຄວນມີການເກືອດຫ້າມ ການນຳໃຊ້ ແຮ້ວເພື່ອຈັບໝີສະເພາະ (ແຮ້ວ ໝີ). ສ່ວນກົນໄກປະເພດທີ່ໃຊ້ ເສັ້ນລວດປະກອບກັບຫອກ ຫຼື ປືນ (ແຮ້ວຣາວ) ທີ່ນຳໃຊ້ໃນການຂ້າສັດລ້ຽງລູກດ້ວຍນ້ຳນົມຂະໜາດໃຫຍ່ຄວນມີ ການເກືອດຫ້າມ.ນອກຈາກນີ້,ອາວຸດປະເພດນີ້ ອາດຈະເປັນອັນຕະລາຍຕໍ່ມະນຸດ ແລະ ເປັນຜົນສະທ້ອນແກ່ຜູ້ຄົນທີ່ ເຂົ້າມາຢ້ຽມຢາມປ່າສະຫງວນ ອີກດ້ວຍ.

## ຄຳເຫັນໃນອະນາຄົດ

ຍັງບໍ່ທັນມີບົດແນະນຳອັດໃດ ທີ່ຈະຊ່ວຍໃຫ້ຊາວບ້ານ ແລະ ພະນັກງານຮູ້ໄດ້ວ່າ ການລ່າສັດປ່າ ປະເພດຄຸ້ມຄອງ ຢູ່ໃນກອບຂອງຄວາມຍືນຍົງແລ້ວ ຫຼື ບໍ່. ຢາກກຳນົດຄວາມຍືນຍົງໄດ້ ຈຳເປັນຕ້ອງມີຂໍ້ມູນຂ່າວສານຢ່າງຕໍ່ເນື່ອງ ກ່ຽວກັບລະດັບຄວາມສົມບູນ ແລະປະລິມານການລ່າ ແລະ ການຊົມໃຊ້ສັດປ່າ ປະເພດຄຸ້ມຄອງ ແລະ ປະເພດ ທີ່ຖືກນຳໃຊ້ຫຼາຍທີ່ສຸດ. ບຸລິມະສິດອັນສຳຄັນສຳລັບການຄົ້ນຄ້ວາ ແລະ ການຕິດຕາມກວດກາແມ່ນ ຂໍ້ມູນຂ່າວສານ ກ່ຽວກັບ ສະຖານະພາບ ແລະ ການນຳໃຊ້ສັດປ່າຈຳພວກທີ່ ຖືກລ່າຢູ່ເປັນປະຈຳ ຊຶ່ງລວມເອົາ ໄກ່ຂົວ, ນົກກະທາ, ນົກກາງແກ, ເຫງັ່ນ ແລະ ສັດລ້ຽງລູກດ້ວຍນ້ຳນົມທີ່ມີ ຕີນເປັນກີບ. ຂໍ້ມູນດັ່ງກ່າວນີ້ຄວນເອົາໄປນຳໃຊ້ ເພື່ອປະກອບ

ການອອກແບບ ແລະປັບປຸງແຜນການຄຸ້ມຄອງສັດປ່າພາຍໃນໝູ່ບ້ານ ເພື່ອຮັບປະກັນໃຫ້ ຈຳນວນປະຊາກອນຂອງສັດເຫຼົ່ານັ້ນ ມີຈຳນວນພຽງພໍ ໃນການນຳມາເປັນແຫຼ່ງອາຫານໃນອານາຄົດ.

ເພື່ອເປັນການສະກັດກັ້ນ ການລ່າສັດປ່າ ແລະ ກຳຈັດການຊົມໃຊ້ສັດປ່າປະເພດຫວງຫ້າມ, ຕ້ອງໄດ້ບັງຄັບໃຊ້ລະບຽບກົດໝາຍຢ່າງເຂັ້ມງວດ ຢູ່ໃນຕົວເມືອງໃຫຍ່ ແລະ ຢູ່ໃນເຂດໝູ່ບ້ານອ້ອມຂ້າງ ເຂດປ່າສະຫງວນ. ບັນດາສັດປ່າເຫຼົ່ານີ້ ຢູ່ໃນ ສປປ ລາວ-ແມ່ນຕົກໃນສະພາບ ມີຄວາມສ່ຽງຕໍ່ການສູນພັນ ຫຼືເປັນປະເພດສັດຫວງຫ້າຢູ່ ໃນລະດັບໂລກ, ແລະ ໄດ້ມີການລາຍງານວ່າ ມີຈຳນວນຫຼຸດນ້ອຍຖອຍລົງ. ຖ້າຫາກວ່າ ຄຳສະເໜີແນະນຳ ໃນປຶ້ມເຫຼັ້ມນີ້ ໄດ້ຮັບການຈັດຕັ້ງປະຕິບັດ ແລະ ມີການສືບຕໍ່ ປັບປຸງພາຍຫຼັງໄດ້ທຳການຄົ້ນຄວ້າໃນຄັ້ງໃໝ່, ຊາວບ້ານ ທີ່ອາໄສຢູ່ພາຍໃນ ແລະ ອ້ອມຂ້າງເຂດປ່າສະຫງວນ ຈະສາມາດສືບຕໍ່ລ່າສັດປ່າ ໃນຈຳນວນພຽງພໍ ໃນການຮັກສາໄວ້ແຫ່ງປະເພນີ ແລະ ມີຄວາມສົມດູນທາງດ້ານທາດອາຫານ, ໃນຂະນະທີ່ຍັງດຳເນີນການອະນຸລັກຊະນິດພັນສັດປ່າໄວ້ ເພື່ອອະນາຄົດ ຂອງລຸ້ນໃໝ່.



## Selected references


Chamberlain, J., Phomsombath, P. & Thantavong, V. 2002. The impact on poverty of rural roads in Louang Prabang and Khammouane provinces under LSRSP 1. SIDA. Vientiane.

Hansel, T. In press. "Observations on Subsistence Hunting along the Phu Yai Mountain Range, Xanakham District, Vientiane Province, Lao PDR". Nat. Hist. Bull. of the Siam Society.

NAFRI. 2003. Household survey of Phonsay and Namo Districts, Luang Prabang Province. NAFRI Socioeconomics Unit. Vientiane.



This paper is adapted from: "Wildlife Hunting and Use in Luangnamtha Province: Implications for Rural Livelihoods and Biodiversity Conservation in the Uplands of the Lao PDR" in Poverty Reduction and Shifting Cultivation Stabilisation in the Uplands of Lao PDR: Tech-

nologies, approaches and methods for improving upland livelihoods. NAFRI. 2005.

**Authors:**
Arlyne Johnson (ajohnson@wcs.org), Sarinda Singh (sarinda@coombs.anu.edu.au), and Malykham Duongdala (mdongdala@wcs.org)

Improving Livelihoods in the Uplands of the Lao PDR was produced in 2005 by NAFRI, NAFES and NUOL.